## ໝວດທີ III
## ໜ້າທີ່ ແລະຂອບເຂດສິດ

**ມາດຕາ 6. ຂອບເຂດສິດ**

ໜ່ວຍໄກ່ເກັ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີຂອບເຂດສິດ ດັ່ງນີ້:

1. ມີສິດສຶກສາອົບຮົມ ແລະໄກ່ເກັ່ຍຂໍ້ຂັດແຍ່ງຂັ້ນບ້ານໂດຍສັນຕິວິທີ ;
2. ມີສິດລາຍງານຂໍຄຳເຫັນຊີ້ນຳຈາກນາຍບ້ານ ຫຼືຄະນະພັກຮາກຖານກຸ່ມບ້ານກ່ຽວກັບວຽກງານຂອງໜ່ວຍໄກ່ເກັ່ຍ;
3. ເກັບຄ່າບໍລິການໃນການໄກ່ເກັ່ຍຈາກຄູ່ກໍລະນີ ຈຳນວນ 100.000 ກີບ ຕໍ່ຂໍ້ຂັດແຍ່ງ ຕາມທີ່ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະຄ່າບໍລິການ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008. ໂດຍມອບໃຫ້ຄູ່ຂັດແຍ່ງຮັບຜິດຊອບຈ່າຍຜູ້ລະເຄິ່ງ (50.000 ກີບ);
4. ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍ;
5. ໄດ້ຮັບຄ່າແຮງງານ ໂດຍນຳໃຊ້ຄ່າບໍລິການທີ່ເກັບຈາກຄູ່ຂັດແຍ່ງນັ້ນ;
6. ປະສານສົມທົບກັບອົງການກ່ຽວຂ້ອງຂອງບ້ານໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ
7. ສິດອື່ນໆຕາມການມອບໝາຍຂອງອົງການປົກຄອງບ້ານ ຫຼືຫ້ອງການຍຸຕິທຳເມືອງທີ່ສອດຄ່ອງກັບພາລະບົດບາດຂອງຕົນ.

**ມາດຕາ 7. ໜ້າທີ່**

ໜ່ວຍໄກ່ເກັ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງຮໍ່າຮຽນ, ໂຄສະນາສຶກສາອົບຮົມລະບຽບກົດໝາຍຕ່າງໆ ເຮັດໃຫ້ພົນລະເມືອງພາຍໃນບ້ານມີສະຕິເຄົາລົບ ແລະປະຕິບັດກົດໝາຍຢ່າງເຂັ້ມງວດ;
2. ໄກ່ເກັ່ຍຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ສາຍພົວພັນຄອບຄົວ ແລະອື່ນໆ ຕາມການຂໍຮ້ອງ ຫຼືສະເໜີຂອງຄູ່ກໍລະນີທີ່ມີຄວາມຂັດແຍ່ງກັນ;
3. ແກ້ໄຂຄະດີເດັກຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ ;
4. ໃຫ້ຄວາມຊ່ວຍເຫຼືອ, ຮ່ວມມືໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນຄະດີແພ່ງ ແລະຄະດີອາຍາ ກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ ຊຶ່ງຄູ່ກໍລະນີ ຫຼືຜູ້ເສັຍຄະດີຢູ່ບ້ານຂອງຕົນ;
5. ໄກ່ເກັ່ຍຄະດີອາຍາໄດ້ໃນບາງກໍລະນີ ຖ້າວ່າການກະທຳດັ່ງກ່າວເປັນການກະທຳຜິດທີ່ເບົາບາງຕາມທີ່ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍອາຍາ, ຊຶ່ງຜູ້ເສັຍຫາຍບໍ່ໄດ້ຮ້ອງຟ້ອງຂຶ້ນສານ, ແຕ່ຫາກສະເໜີມາຍັງໜ່ວຍໄກ່ເກັ່ຍຂໍ້ຂັດແຍ່ງຂັ້ນບ້ານເພື່ອພິຈາລະນາແກ້ໄຂ ເຊັ່ນ: ການທຳຮ້າຍຮ່າງກາຍລະຫວ່າງຍາດໃກ້ຊິດທີ່ບໍ່ມີບາດເຈັບສາຫັດ